ທຸກໆບໍລິການຂອງລັດຖະບານແລະຂອງຊຸມຊົນ ຕ້ອງ:

- ເຮັດໃຫ້ທ່ານຮູ້ສຶກວ່າທ່ານຖືກຕ້ອນຮັບ
- ປະຕິບັດຕໍ່ທ່ານດ້ວຍຄວາມນັບຖື
- ປະຕິບັດຕໍ່ທ່ານເຊັ່ນດຽວກັບຄົນອື່ນໆທຸກຄົນ
- ຮູ້ກ່ຽວກັບວັດທະນະທໍາຕ່າງໆ
- ຊ່ວຍທ່ານໃຫ້ເຂົ້າໃຈເຖິງສິດທິຂອງທ່ານ.

ທ່ານມີສິດທີ່ຈະຮ້ອງຮຽນກ່ຽວກັບຜູ້ໃຫ້ບໍລິການ.

**ເຈົ້າໜ້າສືບສວນຄໍາຟ້ອງແຫ່ງລັດ NSW**

ພວກເຮົາຢູ່ນີ້ເພື່ອຊ່ວຍເຫຼືອທຸກໆຄົນໃນ NSW.
ພວກເຮົາຕ້ອງການໃຫ້ທຸກໆຄົນໄດ້ຮັບການປະຕິບັດຢ່າງຍຸຕິທໍາ.
ບໍລິການຂອງເຮົາແມ່ນຟຣີ.

## ຕິດຕໍ່ຫາພວກເຮົາ

**ໂທຫາ 02 9286 1000**

**ຄ່າໂທຟຣີ 1800 451 524**
ນອກເຂດຕົວເມືອງຊິດນີ
- ໂທຈາກມືຖືອາດໄດ້ເສຍຄ່າໂທ.

**info@ombo.nsw.gov.au**

**ບໍລິການໂທສົ່ງຕໍ່ແຫ່ງຊາດ 133 677**

Interpreter

**ນາຍພາສາ**
ຂັ້ນຕອນ 1: ໂທຫາ **TIS 131 450**
ຂັ້ນຕອນ 2: ຂໍເວົ້າກັບເຈົ້າໜ້າທີ່ສືບສວນຄໍາຟ້ອງແຫ່ງລັດ **NSW - 9286 1000**

**www.ombo.nsw.gov.au**

ISBN: 978-1-925885-57-6

Lao | ພາສາລາວ

Ombudsman
New South Wales



# ທ່ານມີບັນຫາກ່ຽວກັບການບໍລິການຂອງລັດຖະບານ ຫຼື ບໍລິການຂອງຊຸມຊົນໃນລັດ NSW ບໍ?

# ທ່ານອາດໄດ້ເຄີຍພະຍາຍາມທີ່ຈະທຳການຮ້ອງຮຽນມາແລ້ວ. **ແຕ່ວ່າ** ມັນບໍ່ໄດ້ຜົນ.



## ທ່ານຄຶດວ່າທ່ານໄດ້ຮັບການປະຕິບັດທີ່ບໍ່ຍຸຕິທຳບໍ?

**ທ່ານໄດ້ພະຍາຍາມຂໍຄວາມຊ່ວຍເຫຼືອ, ແຕ່ບໍ່ສາມາດ:**

- ແກ້ໄຂບັນຫາໄດ້
- ໄດ້ຂໍ້ມູນເພີ່ມເຕີມ
- ຄົ້ນພົບກ່ຽວກັບສິດທິຂອງທ່ານ.

ພະນັກງານບໍ່ໃຫ້ການຊ່ວຍເຫຼືອ, ຫຼື ເຂົາເຈົ້າ

- ບໍ່ມີມາລະຍາດແລະບໍ່ນັບຖືທ່ານ
- ບໍ່ມີຂໍ້ມູນໃຫ້ເປັນພາສາຂອງທ່ານ
- ບໍ່ມີນາຍພາສາໃຫ້.

## ເຈົ້າໜ້າທີ່ສືບສວນຄຳຟ້ອງແຫ່ງລັດ NSW ອາດຈະຊ່ວຍໄດ້.

ພວກເຮົາສາມາດຊ່ວຍທ່ານ:

- ສົ່ງຈົດໝາຍໄປຫາຜູ້ໃຫ້ບໍລິການ
- ຊອກຫາຜູ້ທີ່ສາມາດຊ່ວຍເຫຼືອໄດ້ ໃຫ້ທ່ານພົວພັນໄປຫາ
- ລະບຸສິ່ງທີ່ທ່ານຕ້ອງການຢາກໄດ້ຈາກການຮ້ອງຮຽນຂອງທ່ານ.

ພວກເຮົາອາດຈະ:

- ຂໍໃຫ້ທ່ານຖືເອົາເອກະສານໃດໆທີ່ທ່ານມີ ກ່ຽວກັບບັນຫານັ້ນມານຳ, ເຊັ່ນຈົດໝາຍທີ່ທ່ານໄດ້ຂຽນຫາຜູ້ໃຫ້ບໍລິການຫຼືຈົດໝາຍທີ່ຜູ້ໃຫ້ບໍລິການໄດ້ຂຽນມາຫາທ່ານ
- ໂອ້ລົມກັບຜູ້ໃຫ້ບໍລິການທີ່ທ່ານມີບັນຫາກັບເຂົາເຈົ້າ
- ໂອ້ລົມກັບຄົນອື່ນໆທີ່ໄດ້ຊ່ວຍທ່ານມາກ່ອນ.

ຄົນອື່ນໆກໍອາດມີບັນຫາດຽວກັບທ່ານ. ພວກເຮົາເຮັດວຽກກັບບັນດາຜູ້ໃຫ້ບໍລິການເພື່ອເຮັດໃຫ້ບໍລິການນັ້ນດີຂຶ້ນສຳລັບທຸກໆຄົນ.